# ທະນາຄານແຫ່ງ ສປປ ລາວ

# ມອບເງິນ 8 ລ້ານກີບໃຫ້ແກ່ກອງວິທະຍຸ-ໂທລະພາບກອງທັບ




ເພື່ອເປັນການຂໍ່ານັບ-ຊົມເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 63 ປີ ແລະໂດຍຕອບສະໜອງຕາມການສະເໜີຂອງຄະນະພັກ-ຄະນະບັນຊາກອງວິທະຍຸ-ໂທລະພາບກອງທັບ, ໃນຕອນແລງຂອງວັນທີ 27 ມັງກອນ ຜ່ານມານີ້ ອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍທ່ານ ມິ່ງແກ້ວ ສຸວັດດີ ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ໄດ້ເຂົ້າອວຍພອນ ແລະ ນຳເອົາກະຕ່າດອກໄມ້-ກະຕ່າຂອງຂວັນ ແລະ ເງິນສົດມອບແດ່ຄະນະພັກ-ຄະນະບັນຊາກອງດັ່ງກ່າວ.

ໃນໂອກາດດັ່ງກ່າວທ່ານ ມິ່ງແກ້ວ ສຸວັດດີ ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ ກັບທ່ານ ພັນເອກ ບົວຄຳ ແກ້ວມະຫາວົງ ຄະນະພັກ-ຄະນະບັນຊາກອງວິທະຍຸ-ໂທລະພາບກອງທັບ ກໍໄດ້ຜັດປ່ຽນກັນຍ້ອງຍໍຊົມເຊີຍຕໍ່ຜົນງານແຫ່ງການເຄື່ອນໄຫວກໍ່ສ້າງ-ປັບປຸງ ແລະ ສູ້ຮົບມີໄຊໃນຕະຫຼອດໄລຍະ 63 ປີ ຜ່ານມາຂອງກອງທັບປະຊາຊົນລາວ ທີ່ຢູ່ພາຍໃຕ້ການນຳພາເດັດຂາດໂດຍກົງ ແລະ ຮອບດ້ານຂອງພັກ.

ຈາກນັ້ນ, ທັງສອງທ່ານກໍໄດ້ຕີລາຄາສູງຕໍ່ໝາກຜົນແຫ່ງການພົວພັນຮ່ວມມືລະຫວ່າງທະນາ ຄານແຫ່ງ ສປປ ລາວ ກັບກະຊວງປ້ອງກັນປະເທດກໍຄືກອງວິທະຍຸ-ໂທລະພາບກອງທັບ ແລະ ຍັງໄດ້ຢືນຢັນວ່າ: ຈະສືບຕໍ່ໃຫ້ການພົວພັນຮ່ວມມືໃຫ້ແໜ້ນແຟ້ນຂຶ້ນກວ່າເກົ່າ ແລະ ພ້ອມກັນບຸກບືນຜັນຂະຫຍາຍມະຕິ IX ຂອງພັກໃຫ້ປະກົດຜົນເປັນຈິງ.